**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ
ພາກວິຊາຄູ ພາສາອັງກິດ-ໄອຊີທີ ເລກທີ 023/ອກ.ອທ
ນະຄອນຫຼວງວຽງຈັນ, ວັນທີ 30
ທັນວາ 2024

# ບົດສະຫຼຸບປະຈຳເດືອນ 12/2024
# ແລະ ແຜນວຽກຈຸດສຸມເດືອນ 1/2025

**ຮຽນ:** ທ່ານ ຜູ້ອຳນວຍການວິທະຍາໄລຄູ ດົງຄຳຊ້າງ

**ເລື່ອງ:** ບົດສະຫຼຸບປະຈຳເດືອນ 12/2024 ແລະ ແຜນວຽກຈຸດສຸມປະຈຳເດືອນ 1/2025 ຂອງພາກວິຊາຄູ ພາສາອັງກິດ-ໄອຊີທີ

ພາກວິຊາຄູ ພາສາອັງກິດ-ໄອຊີທີ ໄດ້ສັງລວມແຜນການເຄື່ອນໄຫວປະຈຳເດືອນ 12/2024 ແລະ ແຜນຈຸດສຸມປະຈຳເດືອນ 1/2025 ດັ່ງນີ້:

## I. ການເຄື່ອນໄຫວວຽກງານທີ່ພົ້ນເດັ່ນປະຈຳເດືອນ 12/2024

### ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ພະນັກງານສ່ວນຫຼາຍມີແນວຄິດຫຼັກໝັ້ນດີ ແລະ ມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ.
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດໄດ້ເປັນຢ່າງດີເຊິ່ງມັນໄດ້ສະແດງອອກໃນການປະຕິບັດໂມງເວລາ ແຕ່ງກາຍ, ການໄປ-ການມາ ແລະ ການປະຕິບັດວຽກງານແຕ່ລະໜ້າວຽກ.

### ຂ. ວຽກງານວິຊາສະເພາະ

1. ຄູທຸກຄົນໄດ້ເອົາໃຈໃສ່ຂຶ້ນຫ້ອງສອນເປັນປົກກະຕິ.
2. ນຳພານັກສຶກສາຄູອອກແຮງງານໃນຕອນແລງວັນພຸດ
3. ນຳພານັກສຶກສາຄູພາຍໃນສາຍອອກແຮງງານໃນເຂດຮັບຜິດຊອບ
4. ຕິດຕາມ, ຊຸກຍູ້ ການຈັດການຮຽນການສອນຂອງຄູ ແລະ ນັກສຶກສາໃນພາກວິຊາ
5. ລົງຕິດຕາມນັກສຶກສາລົງຝຶກສອນຕົວຈິງທີ່ໂຮງຮຽນມັດທະຍົມສາທິດ ດົງຄຳຊ້າງ
6. ສືບຕໍ່ເຮັດບົດວິໄຈ
7. ຈັດບຳລຸງພາສາອັງກິດໃຫ້ຄູພາຍໃນວິທະຍາໄລຄູ ສອນໂດຍອາສາສະໝັກມາຈາກ USA
8. ນຳພານັກສຶກສາຈັດສະພາບແວດລ້ອມໜ້າຕຶກພາກວິຊາ ໄດ້ຊື້ດິນບ່ອກມາປັບປຸງເຮັດຫນານດອກໄມ້
9. ຝຶກອົບຮົມການນຳໃຊ້ຖານຂໍ້ມູນ
10. ປ້ອນຂໍ້ມູນຄູສອນຕາມລາຍວິຊາໃນຖານຂໍ້ມູນ
11. ຝຶກອົບຮົມ LCA ການສອນແບບເອົານັກຮຽນເປັນໃຈກາງ
12. ໄປທັດສະນະສຶກສາທີ່ຫໍພິພິດຕະພັນວຽງຈັນ ລາວສະໄໝ
13. ສ້າງແວັບໄຊຣ໌ຂອງພາກວິຊາ ແລະ ປັບປຸງ

❖ **ຂໍ້ຄົງຄ້າງ:** ຍັງມີບາງວຽກທີ່ຕ້ອງໄດ້ສືບຕໍ່ປະຕິບັດ ແລະ ປະຕິບັດແບບຕໍ່ເນື່ອງ

**II. ແຜນວຽກຈຸດສຸມປະຈຳເດືອນ 1/2025**

**ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ**

1.ສືບຕໍ່ແນວຄິດຫຼັກໝັ້ນ, ເຊື່ອໝັ້ນຕໍ່ການນຳພາຂອງຂອງພັກ

2.ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.

3.ຫ້າວຫັນປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດ

**ຂ. ວຽກງານວິຊາສະເພາະ**

1. ສືບຕໍ່ຂຶ້ນຫ້ອງສອນປົກກະຕິ.
2. ສືບຕໍ່ນຳພານັກສຶກສາອອກແຮງງານໃນເຂດຮອບຜິດຊອບ
3. ສືບຕໍ່ຕິດຕາມ, ຊຸກຍູ້ ການຈັດການຮຽນການສອນຂອງຄູ ແລະ ນັກສຶກສາໃນພາກວິຊາ
4. ສືບຕໍ່ຕິດຕາມ, ຊຸກຍູ້ ຊ່ວຍເຫຼືອຄູອາສາສະໝັກທີ່ລົງຝຶກສອນຢູ່ວິທະຍາໄລຄູ
5. ສືບຕໍ່ເຮັດບົດວິໄຈ
6. ສືບຕໍ່ຕິດຕາມນັກສຶກສາລົງຝຶກສອນຕົວຈິງທີ່ໂຮງຮຽນມັດທະຍົມສາທິດ ດົງຄຳຊ້າງ
7. ບຳລຸງພາສາອັງກິດໃຫ້ຄູພາຍໃນວິທະຍາໄລຄູ ສອນໂດຍອາສາສະໝັກມາຈາກ USA
8. ຮ່ວມໂມງສອນ
9. ຈັດສະພາບແວດລ້ອມເຂດທີ່ຮັບຜິດຊອບ
10. ແນະນຳ 15 ວິທີສອນ ແລະ ການແຕ່ງບົດສອນແບບ LCA and OBE ໃຫ້ນັກສຶກສາໃນພາກວິຊາ
11. ສົມທົບກັບໜ່ວຍງານທີ່ກ່ຽວຂ້ອງຝຶກອົບຮົມການນຳໃຊ້ ICT ກ່ຽວກັບ AI, google sites

**III. ຂໍ້ສະເໜີ**

ດັ່ງນັ້ນ, ພາກວິຊາຄູ ພາສາອັງກິດ-ໄອຊີທີ ຈິ່ງລາຍງານມາຍັງທ່ານເພື່ອຮັບຊາບຕາມທາງຄວນດ້ວຍ.

**ຫົວໜ້າພາກວິຊາຄູ ພາສາອັງກິດ-ໄອຊີທີ** **ຜູ້ສັງລວມ**